LALCO
LAO ASEAN LEASING PUBLIC COMPANY

ບົດບັນທຶກ ກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ປະຈຳປີ 2021 ຂອງ ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ

ວັນ, ເວລາ ແລະ ສະຖານທີ່

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 29 ຕຸລາ 2021 ເວລາ 11:00 ຕອນເຊົ້າ, ທີ່ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອມະຫາຊົນ ຊັ້ນ 3, ຕຶກ NNN, ຖະ ໜົນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ.

ເລີ້ມເປີດກອງປະຊຸມ

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ເປັນວັນປິດປຶ້ມເພື່ອ ກຳ ນົດຜູ້ຖືຫຸ້ນຂອງບໍລິສັດ ທີ່ມີສິດເຂົ້າຮ່ວມກອງ ປະຊຸມຜູ້ຖືຮຸ້ນສະໄໝວິສາມັນ, ມີທຶນຈົດທະບຽນທີ່ຖອກແລ້ວ 30,150,000,000ກີບ, ເຊິ່ງເປັນຕົວແທນໃຫ້ແກ່ 301,500,000 ຮຸ້ນທີ່ອອກໃຫ້. ໃນຕອນເລີ່ມຕົ້ນຂອງກອງປະຊຸມ, ປະກອບມີຜູ້ຖືຫຸ້ນ 6 ຄົນ ເຂົ້າຮ່ວມໂດຍ ຜູ້ຖືຮຸ້ນມອບສິດ ໃຫ້ຜູ້ຕ່າງໜ້າເຂົ້າຮ່ວມແທນ 6 ຄົນ, ເຊິ່ງລວມເປັນ 297,878,600 ຮຸ້ນ ຫຼື 98,80%, ເຊິ່ງຫຼາຍກວ່າເຄິ່ງໜຶ່ງ ຂອງຮຸ້ນທັງໝົດ ທີ່ອອກໃຫ້.

ທ່ານ ແອັດນັນ ການີ, ສະມາຊິກສະພາບໍລິຫານ ຜູ້ທີ່ໄດ້ຮັບມອບໝາຍ ຈາກທ່ານນາງ Yuki Scott, ປະທານສະມາຊິກ ສະພາບໍລິຫານ ໃຫ້ເປັນປະທານກອງປະຊຸມ ແລະ ປະກາດກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນ ປະຈຳປີ 2021 ທີ່ຈັດຂຶ້ນ ໂດຍ ການຕ້ອນຮັບທຸກພາກສ່ວນ ທີ່ເຂົ້າຮ່ວມກອງປະຊຸມ ໂດຍມີລາຍລະອຽດດັ່ງນີ້:

ທ່ານ ແອັດນັນ ການີ ເປັນຄົນ ແນະນຳ ຜູ້ອຳນວຍການຂອງບໍລິສັດ, ຜູ້ອຳນວຍການຝ່າຍບໍລິຫານ ແລະ ພະນັກງານທີ່ ກ່ຽວຂ້ອງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ສະມາຊິກສະພາບໍລິຫານ

ຊື	ຕຳແໜ່ງ	ມອບສິດໃຫ້
ທ່ານນາງ. Yuki Scott	ປະທານ	Mr. Adnan Ghani
ທ່ານ. Mitsuteru Nagaya	ຮອງປະທານ	Ms. Soukdavanh
ທ່ານ. Shingo Yamanaka	ສະມາຊິກ	Ms. Pinkeo Bounchundy
ທ່ານ.Hirofumi Inada	ສະມາຊິກ	Ms. Nicole Kyle Nale

LALCO

ທ່ານນາງ. Harumi Ide	ສະມາຊິກ	Ms. Catherine Malucay

ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ທ່ານນາງ. ອັນນະພອນ ສຸນັນທາ	ຜູ້ຕ່າງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ
ທ່ານນາງ ສຸນິດາ ພາລາງອັນ	ຜູ້ຕ່າງໜ້າຈາກ ຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ
ທ່ານນາງ. ເກສອນ ເທບພາສຸວັນ	ຜູ້ຖືຮຸ້ນລາຍຍ່ອຍຂອງ ລອຊ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ

ພິທີກອນ	ທ່ານ ແອັດນັນ ການີ / ທ່ານນາງ ປິ່ນແກ້ວ ບຸນຈັນດີ
ພະນັກງານຕ້ອນຮັບ	ທ່ານນາງ. ລຸ້ລີ ລີເລ່ຍນູ
ພະນັກງານກວດສອບເອກະສານ	ທ່ານນາງ. ລຸ້ລີ ລີເລ່ຍນູ
ພະນັກງານລົງທະບຽນ	ທ່ານນາງ. ລຸ້ລີ ລີເລ່ຍນູ
ກອງເລຂາ	ທ່ານນາງ. ຈິນຕະນາ ນາຄະປະເສີດ
ພະນັກງານລົງຄະແນນສຽງ	ທ່ານ ໄຊພອນ ໄຊຍະວົງ
ພະນັກງານລະບົບອີເລັກໂຕນິກ	ທ່ານ ໄຊພອນ ໄຊຍະວົງ

LALCO
LAO ASEAN LEASING PUBLIC COMPANY

ຫລັງຈາກນັ້ນ, ພິທີກອນ ໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມແລະລາຍງານແຕ່ລະວາລະ ຂອງກອງປະຊຸມດັ່ງຕໍ່ໄປນີ້:

1. **ການລົງຄະແນນສຽງ:**

- ທ່ານຜູ້ຖືຫຸ້ນໜຶ່ງທ່ານ ມີຄະແນນສຽງເຊິ່ງເທົ່າກັບຈຳນວນຮຸ້ນທັງໝົດ ຂອງທ່ານ; ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງແຕ່ວາລະ, ປະທານໄດ້ ຈະໄດ້ສອບຖາມຖ້າວ່າມີຜູ້ຖືຫຸ້ນຜູ້ທີ່ບໍ່ເຫັນດີ ຫຼືບໍ່ຮອງຮອງໃນ ວາລະນັ້ນ. ໃນກໍລະນີທີ່ ບໍ່ເຫັນດີຫລືບໍ່ຮັບຮອງ ແມ່ນໃຫ້ ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ເຊິ່ງ ໄດ້ແຈກຢາຍໂດຍເຈົ້າໜ້າທີ່ກ່ອນການປະຊຸມ ພ້ອມທັງຕ້ອງໄດ້ຍົກບັດຂຶ້ນມາຈົນກວ່າເຈົ້າໜ້າທີ່ຈະເກັບກຳຂໍ້ມູນ ເພື່ອໄປກວດນັບຄະແນນສຽງໃນວາລະນັ້ນ ແລະ ສຳລັບຜູ້ຖືຫຸ້ນທີ່ບໍ່ຍົກບັດຂຶ້ນມາ, ຖືວ່າຜູ້ຖືຮຸ້ນດັ່ງກ່າວເຫັນດີກັບ ມະຕິທີ່ໄດ້ສະເໜີໃນກອງປະຊຸມ.
- ສຳລັບຜູ້ຖືຫຸ້ນມອບສິດ ໃຫ້ເປັນຕົວແທນເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ຕາມຄວາມຮຽກຮ້ອງ ຕ້ອງການຂອງຜູ້ຖືຫຸ້ນຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງດັ່ງທີ່ຜູ້ຖືຫຸ້ນລະບຸໄວ້ ໃນໃບມອບສິດ ໄປບັນທຶກຄະນແນນໄວ້ລ່ວງໜ້າເປັນທີ່ຮຽບຮ້ອຍແລ້ວ. ເພື່ອອຳນວຍຄວາມສະດວກໃຫ້ຜູ້ຕາງໜ້າ ດັ່ງກ່າວບໍ່ຈຳເປັນຕ້ອງລົງຄະແນນສຽງອີກເທື່ອໜຶ່ງໃນກອງປະຊຸມ.

2. **ການນັບຄະແນນສຽງ**

- ການນັບຄະແນນສຽງຈາກແຕ່ລະວາລະຈະຖືກປະຕິບັດໂດຍອີງໃສ່ຄວາມບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມແລະຜູ້ ຕາງໜ້າ ທີ່ເຂົ້າຮ່ວມກອງປະຊຸມ ໂດຍບໍລິສັດ ໄດ້ບັນທຶກລ່ວງໜ້າແລ້ວ ໂດຍການຫັກອອກຈາກຫຸ້ນທັງໝົດ ຂອງຜູ້ ຖືຫຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ສຳລັບແຕ່ລະວາລະ.
- ປະທານຈະປະກາດຜົນການລົງຄະແນນສຽງຈາກແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ພາຍຫຼັງທີ່ ການລົງ ຄະແນນສຽງແຕ່ລະຄັ້ງໄດ້ສິ້ນສຸດລົງ. ໃນກໍລະນີ ຜູ້ຖືຫຸ້ນໄດ້ລົງຄະແນນສຽງບໍ່ເຫັນດີ ພາຍຫຼັງທີ່ປະທານປະກາດ ຄະແນນສຽງໃຫ້ກອງປະຊຸມເມື່ອວາລະປະຊຸມສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ ນັບເອົາຄະແນນສຽງດັ່ງກ່າວ.

ທ່ານປະທານຍັງສືບຕໍ່ກອງປະຊຸມ ໂດຍລາຍງານແຕ່ລະວາລະ ດັ່ງຕໍ່ໄປນີ້:

ວາລະ 1: ພິຈາລະນາຮັບຮອງເອົາແລະອະນຸມັດ ການກູ້ຢືມເງິນຈາກ ບໍລິສັດ Varteni Investments Limited ຈຳນວນ 20,000,000 ໂດລາ (ຊາວລ້ານ ໂດລາ).

ທ່ານ ແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວະລະກອງປະຊຸມ, ເປັນຜູ້ນຳສະເໜີຕໍ່ ກອງປະຊຸມດັ່ງນີ້:

ພິທີກອນ ສະເໜີ ໃຫ້ກອງປະຊຸມພິຈາລະນາຮັບຮອງເອົາແລະອະນຸມັດ ການກູ້ຢືມເງິນຈາກ ບໍລິສັດ Varteni Investments Limited ຈຳນວນ 20,000,000 ໂດລາ (ຊາວລ້ານ ໂດລາ) ເພື່ອເປັນທຶນໃນການຂະຫຍາຍທຸລະກິດ.

LALCO
LAO ASEAN LEASING PUBLIC COMPANY

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297,878,600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ກອງປະຊຸມໄດ້ຮັບຮອງເອົາການກູ້ຢືມເງິນຈາກ ບໍລິສັດ Varteni Investments Limited ຈຳນວນ 20,000,000 ໂດລາ (ຊາວລ້ານ ໂດລາ) ເພື່ອເປັນທຶນໃນການຂະຫຍາຍທຸລະກິດ.

ວາລະ 2: ພິຈາລະນາຮັບຮອງເອົາແລະອະນຸມັດການກູ້ຢືມເງິນຈາກ ຄູ່ຮ່ວມພາຍໃນປະເທດ ຈຳນວນ 5,000,000 ໂດລາ (ຫ້າລ້ານ ໂດລາ)

ທ່ານແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວະລະກອງປະຊຸມ. ພິທີກອນເປັນຜູ້ນຳສະເໜີວະລະຕໍ່ກອງປະຊຸມດັ່ງຕໍ່ໄປນີ້:

ພິທີກອນສະເໜີ ໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາ ການກູ້ຢືມເງິນຈາກ ຄູ່ຮ່ວມພາຍໃນປະເທດ ຈຳນວນ 5,000,000 ໂດລາ (ຫ້າລ້ານ ໂດລາ) ເພື່ອເປັນທຶນໃນການຂະຫຍາຍທຸລະກິດ.ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297,878,600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາການກູ້ຢືມເງິນຈາກ ຄູ່ຮ່ວມພາຍໃນປະເທດ ຈຳນວນ 5,000,000 ໂດລາ (ຫ້າລ້ານ ໂດລາ).

ວາລະ 3: ພິຈາລະນາ ແລະ ຮັບຮອງເອົາການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ ຈຳນວນ 4,000,000-12,000,000 ໂດລາ (ສີ່ລ້ານ ຫາ ສິບສອງລ້ານ ໂດລາ)

ທ່ານແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວະລະກອງປະຊຸມ. ພິທີກອນເປັນຜູ້ນຳສະເໜີວະລະຕໍ່ກອງປະຊຸມ.

ພິທີກອນໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແລະຮັບຮອງເອົາ ການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ ຈຳນວນ 4,000,000-12,000,000 ໂດລາ (ສີ່ລ້ານ ຫາ ສິບສອງລ້ານ ໂດລາ) ເພື່ອເປັນທຶນໃນການຂະຫຍາຍທຸລະກິດ.

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງແມ່ນລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ. ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297,878,600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ ຈຳນວນ 4,000,000-12,000,000 ໂດລາ

LALCO
LAO ASEAN LEASING PUBLIC COMPANY

(ສີ່ລ້ານ ຫາ ສິບສອງລ້ານ ໂດລາ) ເພື່ອເປັນທຶນໃນການຂະຫຍາຍທຸລະກິດ.

ວາລະ 4: ພິຈາລະນາຮັບຮອງເອົາ ແລະ ອະນຸມັດ ແຜນການຂະຫຍາຍທຸລະກິດ ໂດຍເປີດສາຂາໃນ 11 ແລະ ເປີດໜ່ວຍບໍລິການ ປະມານ 20-25 ໜ່ວຍ ໃນລາວ

ທ່ານ ແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວາລະກອງປະຊຸມ, ເປັນຜູ້ນຳສະ ເໜີ ວາລະຕໍ່ກອງປະຊຸມດັ່ງຕໍ່ໄປນີ້:

ສະເໜີໃຫ້ກອງປະຊຸມພິຈາລະນາແລະຮັບຮອງແຜນການຂະຫຍາຍທຸລະກິດ ໂດຍເປີດສາຂາໃນ 11 ແຂວງ ແລະ ເປີດ ໜ່ວຍບໍລິການ ປະມານ 20-25 ໜ່ວຍ ໃນລາວ
ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງ ປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297,878,600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາແຜນການຂະຫຍາຍທຸລະກິດ ໂດຍເປີດສາຂາໃນ 11 ແຂວງ ແລະ ເປີດໜ່ວຍບໍລິການ ປະມານ 20-25 ໜ່ວຍ ໃນລາວ

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມ ໃນເວລາ 11:50 ຕອນເຊົ້າ.

ຕາງໜ້າກອງປະຊຸມ	ຜູ້ບັນທຶກ
ທ່ານ ແອັດນັນ ການີ	ນ ລູ້ລີ ລີເລ່ຍນູ